

ນະວະນິຍາຍ

# ຫົວໃຈສີຂຽວ

ຂຽນໂດຍ: ວັນໃໝ່

ວຽງຈັນ, 2007

ມອບໃຫ້ ທ່ານ ດວງເດືອນ

ບ. ສີລາ ວົງຄຳ

ນະວະນິຍາຍ

# ຫົວໃຈສີຂຽວ

ຮອງຊະນະເລີດ ລາງວັນສິນ ໄຊ 2005
30 ປີ ແຫ່ງ ສ.ປ.ປ.ລາວ

ໂດຍ : ວັນໃໝ່



## ນະວະນິຍາຍ

# ຫົວໃຈສີຂຽວ

ຂຽນໂດຍ: ວັນໃໝ່

ບັນນາທິການ:ໂອທອງ ຄຳອິນຊູ

ອອກແບບໂດຍ: ຄຳເສັງ ແກ້ວທຳວົງ

ແຕ້ມຮູບປະກອບໂດຍ: ບຸນຈິດ ຍິ້ງໃຈ

ຈັດໜ້າໂດຍ: ນ. ຂັນແກ້ວ ສຸດທິວົງ

ພິມຄັ້ງ: I

ພິມທີ່ : ໂຮງພິມແຫ່ງລັດ

ເລກທະບຽນພິມຈຳໜ່າຍ: 140ພຈ 14092007

ຈຳນວນ: 1.000 ຫົວ

ສະຫາວວນລິຂະສິດ

2007

# ຄຳນຳ

" ຫົວໃຈສີຂຽວ " ແມ່ນນະວະນິຍາຍ ລາງວັນທີ 2 ໃນການແຂ່ງຂັນລາງວັນສີນໄຊ ປະຈຳປີ 2005 ເຊິ່ງຈັດໂດຍ ວາລະສານວັນນະສິນ ເນື່ອງໃນໂອກາດສະເຫລີມສະຫລອງ ວັນຊາດຄົບຮອບ 30 ປີ.

ເປັນເລື່ອງລາວຂອງຊີວິດຫລັງຈາກປະເທດຊາດໄດ້ຮັບການປົດປ່ອຍໃໝ່ໆ, ເຊິ່ງການຕໍ່ສູ້ດ້ວຍກຳລັງ ແລະ ອາວຸດ ສິ້ນສຸດລົງແລ້ວ ແຕ່ວ່າການຕໍ່ສູ້ ຢູ່ພາຍໃນແນວຄິດຈິດໃຈຍັງດຳເນີນຕໍ່ ການກໍ່ສ້າງຄົນ ໃໝ່ຈຶ່ງເປັນບັນຫາສຳຄັນ ແລະ ຈຳເປັນ.

ສັງຄົມໃໝ່ໄດ້ເຮັດໃຫ້ ຊາຍໜຸ່ມ ຍິງສາວ ຜູ້ມີນ້ຳໃຈຮັກຊາດ ຮັກບ້ານເກີດເມືອງນອນ ແນມເຫັນ ຄຸນຄ່າອັນວິດງາມຂອງຊີວິດ ແລະ ພ້ອມແລ້ວທີ່ຈະອຸທິດຕົນ ເພື່ອປົກປັກຮັກສາ ແລະ ສ້າງສາປະເທດຊາດ.

ເມື່ອຄວາມຮັກເບັ່ງບານໃນຫົວໃຈ ຄວາມຮັກນັ້ນຈະຕ້ອງສອດຄ່ອງກົມກຽວກັບອຸດົມການ ຜ່ານຜ່າກັບອຸປະສັກ

ທັງຫລາຍ ທັງປວງ ດ້ວຍຄວາມເດັດດ່ຽວໜຽວແໜ້ນ ຄຸນສົມບັດດັ່ງກ່າວໄດ້ສ່ອງແສງໃຫ້ເຫັນຢູ່ໃນ ນະວະນິຍາຍເລື້ອງນີ້.

ໂອທອງ ຄຳອິນຊູ

ຫົວໜ້າອຳນວຍການ ແລະ ບັນນາທິການ

ວາລະສານວັນນະສິນ

# ຄຳຂອບໃຈຂອງຜູ້ຂຽນ

ລາງວັນຄືຜົນຂອງງານຄືກຳລັງໃຈ ຄືແຮງພັກດັນໃຫ້ເຮົາກ້າວ ໄປ ບົນເສັ້ນທາງເດີນ ຂອງຊີວິດ.

ຂ້າພະເຈົ້າ ມີຄວາມດີໃຈຢ່າງຍິ່ງ ທີ່ໄດ້ຮັບລາງວັນຮອງຊະນະ ເລີດ ລາງວັນສີນໄຊ ລາງວັນ - ວັນນະກຳດີເດັ່ນ ປະຈຳປີ 2005 ແລະກໍ່ແມ່ນປີທີ່ປະເທດຊາດ ໄດ້ຮັບການປົດປ່ອຍ ເປັນເອກະລາດສັນຕິພາບ ຄົບຮອບ 30 ປີ .

ສົງຄາມຊື່ງນຳມາຄື : ຄວາມຕາຍ, ຄວາມສູນເສຍ ແລະ ຄວາມ ຢ້ານກົວ ແຕ່ສົງຄາມຢຸດຕິລົງ ບໍ່ໝາຍວ່າສິ່ງເຫລົ່ານັ້ນ ຈະໝົດໄປ ເຊັ່ນ ກັນ ແຕ່ບັນຫາດັ່ງກ່າວມັນຍັງຄົງຄ້າງຢູ່ໃນດວງໃຈຂອງຄົນລາວປະຊາຊົນລາວອີກຫລາຍໆຄົນ.

ຫົວໃຈສີຂຽວ -ນະວະນິຍາຍເລື່ອງນີ້ ຈະນຳພາທ່ານ ຍ້ອນກັບ ໄປໃນ ສະໄໝ ຫລັງຈາກປະເທດຊາດໄດ້ຮັບການປົດປ່ອຍ ແລະເວລາ ນັ້ນ ທຸກຄົນ ມີຊີວິດແນວໃດ, ມີຄວາມຄິດ ແນວໃດ ? ແລະໄວໜຸ່ມໃນເວລານັ້ນ ເຂົາກຳລັງເຮັດຫຍັງ ແລະ ຄິດຫຍັງ. ຄວາມຮັກ

ຂອງພວກເຂົາໃນເວລານັ້ນ ມັນສະແດງອອກ ຄືແນວໃດ?

ຂ້າພະເຈົ້າ ຈຶ່ງໄດ້ຢິບເອົາ ມູນມອງໜຶ່ງ ມາ ຂຽນ ເພື່ອໃຫ້ຄົນໃນໄວນີ້ - ຮຸ່ນນີ້ ໄດ້ຮັບຮູ້ ໄດ້ຊາບຊຶ້ງ ວ່າ ມີວັນນັ້ນ ແຫລະ ຈຶ່ງມີວັນນີ້.

ຂ້າພະເຈົ້າ ຂໍຂອບອົກຂອບໃຈ ນຳກອງບັນນາທິການ, ຄະນະກວດສອບ ທີ່ໄດ້ໃຫ້ກຳລັງ ໃຈ ອັນສູງສົ່ງນີ້ ແກ່ຂ້າພະເຈົ້າ.

ຂ້າພະເຈົ້າ ຂໍຂອບອົກ ຂອບໃຈນຳ ທຸກໆທ່ານ ທີ່ໄດ້ອ່ານ ໄດ້ຊີມ ແລະມີຄວາມຄິດ ຄວາມເຫັນ ໃຫ້ແກ່ ນະວະນິຍາຍ ເລື່ອງນີ້ດ້ວຍ.

ລາງວັນ ຂອງນັກຂຽນ ຄືການອ່ານ ຂອງທ່ານ.

ການອ່ານ ຂອງທ່ານ ຄືລາງວັນ ຂອງຊີວິດ

ຈາກຜູ້ຂຽນ

ວັນໃຫມ່

*ຫົວໃຈດວງໜຶ່ງເຕັ້ນໄປດ້ວຍ ຄວາມຮັກ
ອີກຫົວໃຈດວງ ໜຶ່ງ ເຕັ້ນໄປດ້ວຍ ຄວາມແຄ້ນ
ແລະ ການ ສູນເສຍ !

* ຄວາມຮັກ ຂອງພວກເຂົາ ປຽບເໝືອນເສັ້ນ
ຝ້າຍ ທີ່ຖືກເຜົາຜານ ດ້ວຍສອງລະບອບ ມັນ
ກຣມ ພ້ອມທີ່ຈະຂາດໄດ້ໃນທຸກເມື່ອ ທຸກເວລາ!
*ເມື່ອທ່ານມີຄວາມສຸກ ທ່ານຢາກຈະແບ່ງປັນ.
ເມື່ອທ່ານມີທຸກ ທ່ານຢາກຈະແບ່ງເບົາ !

ບັນຫາ ເຫຼົ່ານີ້ ທ່ານຊອກຫາ
ຄຳຕອບໄດ້ໃນ :

24/VII
ຫ້າມຈຳໜ່າຍ

# ຫົວໃຈສີຂຽວ

# I

ອ້າຍຄູເລີດ ຍ່າງມາ ພ້ອມກັບທະຫານສາມຄົນ ເປັນຊາຍສອງຍິງໜຶ່ງ ມາໃນຊຸດທະຫານໃຫມ່ອຣົ່ມ ຫລ່ຽມຍັງບໍ່ທັນຫັກ. ພວກນັກຮຽນ ຢູ່ໃນຫ້ອງຍັງຕັ້ງທ່າບໍ່ທັນຕິດ ອ້າຍຄູກໍ່ຍ່າງເຂົ້າມາໃນຫ້ອງດ້ວຍທ່າທາງ ແລະ ສີໜ້າຍິ້ມແຍ້ມ ທີ່ບົ່ງບອກບໍ່ຖືກ.

ພວກນັກຮຽນລຸກຂຶ້ນ ໂດຍອັດຕະໂນມັດ ຕໍ່ໜ້າອ້າຍຄູ. ພໍແຕ່ອ້າຍຄູປົ່ງປັ້ມລົງສູ່ໜ້າໂຕະ ກໍ່ເຫັນນາງສາວຄົນໜຶ່ງ ຍ່າງອອກມາຈາກໂຕະທີ່ສາມ ໃນທ່າທາງສະຫງ່າງາມເກີນກວ່າຈະຄິດ ແລ້ວມາຢືນຢູ່ຕໍ່ໜ້າທຸກຄົນ ແລະ ອອກຄໍາສັ່ງດ້ວຍນ້ຳ ສຽງເຂັ້ມແຂງ :

- ທັງໝົດກົງ !

ແລ້ວນາງກັບຫລັງຫັນໃນຈັງຫວະຂອງທະຫານ ແລ້ວກ້າວອອກໄປໜ້າກ້າວໜຶ່ງ ນາງຍົກມືຂຶ້ນເຄົາລົບ ເອົາດິ້ວມືພໍດີຈຸກັບຫາງຄີ້ວ :

-ລາຍງານຄູ ! ຈຳນວນພົນ ມື້ນີ້ມີສາມສິບສອງສະຫາຍ ມີໜ້າຄົບ ! ຂໍຄຳສັ່ງ !

ອ້າຍຄູ ກໍ່ຢືນໃນທ່າກົງ ແລະ ຕອບ :

- ໄດ້ ! ໃຫ້ພັກຜ່ອນ !

ນາງປ່ອຍມືລົງມາແນບຂ້າງ ແລ້ວຫັນຫລັງກັບມາຕໍ່ໜ້າ ຫ້ອງພ້ອມກັບຄຳສັ່ງສັ້ນໆ :

- ພັກ ! ນັ່ງລົງ

ນາງຍ່າງກັບມາໂຕະ ຂອງຕົນເອງ ແລ້ວນັ່ງລົງ

ອ້າຍຄູເລີດ ຊຶ່ງເປັນຄູປະຈຳຫ້ອງກໍໄດ້ເອີ່ຍສຽງທີ່ອົບອຸ່ນ ແລະແຈ່ມ ແຈ້ງອອກມາໃຫ້ນັກຮຽນ ທຸກຄົນໄດ້ຟັງວ່າ :

- ມື້ນີ້ກ່ອນຈະເຂົ້າບົດຮຽນອ້າຍຂໍແນະນຳນັກຮຽນໃຫມ່ທີ່ຈະ ມາຮຽນນຳພວກເຮົາ ໃຫ້ທຸກສະຫາຍໄດ້ຊາບ.

ພໍເວົ້າສຸດ ອ້າຍຄູເລີດກໍ່ຍ່າງອອກໄປເບື້ອງປະຕູ ທີ່ມີທະຫານ ໃຫມ່ສາມຄົນຢືນລໍຢູ່ ແລ້ວຈັບແຂນພວກເຂົາ ເຂົ້າມາ ຢືນຢູ່ກາງຫ້ອງຕໍ່ ຫນ້າທຸກຄົນ.

ພໍແຕ່ພວກເຂົາ ຍ່າງເຂົ້າມາ ທຸກຄົນຢູ່ໃນຫ້ອງກໍ່ສັງເກດໄດ້ປັບ ວ່າ ພວກເຂົາມີສີຫນ້າຕື່ນຕົກໃຈ ບໍ່ຫລາຍກໍ່ຫນ້ອຍ ຄົງຍ້ອນຢູ່ຕໍ່ຫນ້າ ພວກເຂົາ ແມ່ນທະຫານລ້ວນໆ ໃນຊຸດສີຂຽວເຂັ້ມລະຕີ່ !

ຫນຶ່ງໃນສາມຄົນ ຈົ່ມພຶມພໍາ ພໍແຕ່ຕົນເອງໄດ້ຍິນວ່າ " ເຮົາຄົງ ຫລົງເຂົ້າໄປໃນປ່າສີຂຽວ ທີ່ຮູ້ເຫນັງຫລາຍກວ່າ "

ເວລານີ້ ບັນຍາກາດໃນຫ້ອງງຽບສະຫງັດ ເປັນພິເສດ ພວກເຂົາ ທັງຄົນເກົ່າ ແລະໃຫມ່ ຈ້ອງມອງເບິ່ງກັນ ຕ່າງຝ່າຍກໍ່ຕ່າງສັງເກດຄວາມ ຄິດ ຂອງກັນແລະກັນ ແລ້ວກໍ່ເຜີຍຮ້ອຍຍິ້ມ ເປັນສີເຂີນໆອອກມາ .

ສ່ວນຜູ້ຍິງ ຕົວນ້ອຍໆຄົນດຽວ ທີ່ຢືນຢູ່ກາງເຄິ່ງ ແຮ່ງບໍ່ກ້າຫຼຽວ ເບິ່ງຫນ້າຜູ້ໃດເລີຍ. ຄົງຈະບໍ່ແມ່ນອາຍດອກ ຄົງຈະຢ້ານຫລາຍກວ່າ ເພາະຢູ່ຕໍ່ຫນ້ານາງ ເຕັມໄປດ້ວຍທະຫານ ຂຽວຫລື້ມໆກັນທັ້ງນັ້ນ !

ສຽງອ້າຍຄູເລີດ ດັງຂຶ້ນອີກຄັ້ງ ເພື່ອທັບມ້າງ ບັນຍາກາດທີ່ງຽບ ຂຶມ ນັ້ນອອກໄປ.

- ມື້ນີ້ຫ້ອງ 9 ເບ ພວກເຮົາສຸດທີ່ດີໃຈ ທີ່ໄດ້ຮັບເພື່ອນສະຫາຍ

ອີກສາມຄົນ ທີ່ຈະມາຮຽນຕື່ມໃນຫ້ອງຂອງເຮົາ . ເຖິງວ່າ ເວລານີ້ພວກເຮົາຈະ ຮຽນໄປກ່ອນແລ້ວ ເກືອບເດືອນ ແຕ່ອ້າຍຄູຄິດວ່າ ຄົງບໍ່ເປັນບັນຫາດອກ ຖ້າພວກເຮົາຕັ້ງໃຈຮ່ຳຮຽນ ແລ່ນໃຫ້ທັນໝູ່ແລ້ວ ທຸກສິ່ງຄົງຈະລົງຕົວ ແລະ ສຳເລັດ ແມ່ນບໍ່ພວກສະຫາຍ ?

ຕ່າງຄົນຕ່າງຍິ້ມ ຫລຽວເບິ່ງໜ້າກັນ.

ສຽງອ້າຍຄູເລີດ ຍັງເວົ້າຕໍ່

-ພວກເຂົາເຫລົ່ານີ້ ແມ່ນນັກຮຽນນັກສຶກສາ ມາຈາກວຽງຈັນ ແລະຫລວງພະບາງ. ໝົດໂຮງຮຽນກອງທັບພວກເຮົາໄດ້ຮັບຫລາຍສະຫາຍ ແຕ່ສະເພາະຫ້ອງ 9 ເບພວກເຮົາໄດ້ສາມສະຫາຍ ທີ່ພວກເຮົາເຫັນຢູ່ນີ້ແຫລະ. ຂໍສຽງຕົບມື ຕ້ອນຮັບພວກເຂົາແດ່ !

ສຽງຕົບມື ດັງຂຶ້ນແຕ່ບໍ່ດັງເທົ່າທີ່ຄວນ ?

- ຕໍ່ໄປນີ້ ໃຫ້ເພື່ອນທະຫານໃໝ່ ສະເໜີຕົວຕໍ່ໜ້າທຸກຄົນກ່ອນເນາະ ! ເຫັນດີບໍ່ ?

ອ້າຍຄູເລີດ ເວົ້າສຸດ ແລ້ວຍ່າງມານັ່ງປະຈຳຢູ່ທີ່ໂຕະຂອງຕົນຕໍ່ໜ້າທຸກຄົນ.

ປ່ຽນແທນບັນຍາກາດທີ່ງຽບຂຶມ ຫວ່າງກີ້ນີ້ ແມ່ນບັນຍາກາດສົນລະວົນ ຕ່າງຄົນຕ່າງຄິດ, ຕ່າງຄົນຕ່າງຫລຽວເບິ່ງໜ້າກັນ,ສຽງຊຸບຊິບ ຊຸບຊິບ ຢູ່ຫລາຍແຈໂຕະ .

ບາງຄົນ ກໍ່ເອົາມື ມຸບປາກ ແລ້ວຊິ່ມໃສ່ຫູ ຜູ້ຢູ່ທາງຂ້າງແລ້ວກໍ່ຫລຽວເບິ່ງຄົນທີ່ມາໃໝ່ ໃນສາຍຕາ ທີ່ບໍ່ຄ່ອຍເປັນມິດປານໃດ !

ໂດຍສະເພາະພູຫວານ ເຈົ້າຂອງສຽງທີ່ເຂັ້ມແຂງ ທ່າທາງທີ່ງົດງາມ ທີ່ຫາກໍ່ອອກມາ ລາຍງານຈຳນວນພົນ ໃນຫ້ອງຕໍ່ໜ້າອ້າຍຄູຫວ່າງກີ້ນີ້ເອງ ແຮ່ງມີພິລຸດ ສະແດງອອກມາຢ່າງເປີດເຜີຍ. ນາງຫລຽວ

ເບິ່ງພວກເຂົາ ດ້ວຍສາຍຕາທີ່ບໍ່ເປັນມິດຈັກໜ້ອຍ. ນາງກວດສາຍຕາອັນເຢືອກ ເຢັນໄປຍັງຜູ້ທໍາອິດ ແລ້ວກໍ່ມາຢຸດ ຢູ່ກັບຊາຍຜູ້ທີສາມ ທີ່ມີຮ່າງຄີງຈ່ອຍສູງຜິວຂາວຈືດໆ ພ້ອມທັງມີແວ່ນຕາ ຂາວບັກໃຫຍ່ ກວມເອົາໃບໜ້າທີ່ຄົມຄາຍ ມີສະເໜ່. ນາງຖິ້ມສາຍຕາ ລົງທີ່ເຂົາຄົນນັ້ນ ພ້ອມກັບຮອຍເບະສົບ ສະແດງເຖິງຄວາມກຽດຊັງ ແລ້ວກໍ່ປິ່ນໜ້າໄປທາງປ່ອງຢ້ຽມຂອງຫ້ອງຮຽນ ທີ່ແອ້ມດ້ວຍໄມ້ຝາກ ແລ້ວມອງອອກໄປໄກງ ບໍ່ມີໃຜເດົາໄດ້ວ່າ ນາງກໍາລັງຄິດຫຍັງ ?

ຊາຍຜູ້ທໍາອິດ ມາໃນທ່າທາງຮຽບຮ້ອຍ, ໜ້າຕາເຈົ້າຊູ້, ຜິວຂໍາ ຮຸ່ນຮ່າງ ເຂົ້າກັບຊຸດທະຫານ ພໍດີເປະ.

ເຂົາຍິ້ມ ແລະຍໍມືນົບຢ່າງສຸພາບ ພ້ອມກັບຄໍາສະເໜີສັ້ນໆ :

-ຂ້າພະເຈົ້າ ຊື່: ບົວສີ, ອາຍຸ 23 ປີ ເປັນນັກສຶກສາ ມາຈາກວຽງຈັນ .

ຄໍາສະເໜີຈົບລົງ ກັບຮອຍຍິ້ມອາຍໆເຂີນໆ ແຕ່ກໍ່ເປັນຕົວຂອງຕົວເອງດີ .

ຮອດຜູ້ທີສອງ ທຸກຄົນແຮງສຸມສາຍຕາໃສ່ໜັກ ເພາະເຂົາເປັນຜູ້ຍິງຄົນດຽວ ທີ່ມາໃໝ່ຊໍ້າບໍ່ໜໍາ ພັດຍືນຢູ່ຕໍ່ໜ້າທະຫານຫລາຍຄົນສ່ວນຫລາຍພັດເປັນຊາຍ. ນາງກົ້ມໜ້າເອົາສອງມືມາຈັບໆ, ຖູງ ໃສ່ກັນແບບຄົນອາຍ ແຕ່ຄົງຈະຢ້ານຫລາຍກວ່າ ເພາະນາງຕິດຢູ່ໃນຊຸດທະຫານ ທີ່ໃຫຍ່ກວ່າໂຕ ຕັ້ງຫລາຍເທົ່າ !

ນາງເງີຍໜ້າຂຶ້ນ ຫລຽວເບິ່ງທຸກຄົນ ພ້ອມກັບຮ້ອຍຍິ້ມອາຍໆ:

-ຂ້າພະເຈົ້າ ຊື່ນາງມາລີ ມາຈາກຫລວງພະບາງ ເພື່ອມາຮຽນຕໍ່ຢູ່ທີ່ນີ້ :

ນາງຜ່ອນທັນໃຈຍາວບາດໜຶ່ງປານປົດຂອງໜັກ ອັນໃດອັນ

ໜຶ່ງ ອອກຈາກປ່າໄຫລໄປ .

ຮອດຜູ້ທີສາມນີ້ກໍ່ແຮ່ງເປັນຕາໜ້າສົນໃຈ ເພາະເຂົາມາໃນທ່າທາງສະຫງ່າງາມ ພ້ອມກັບແວ່ນຕາຂາວ. ອຳນາດຂອງແວ່ນຕາຂາວມັນສະແດງເຖິງບຸກຄົນ ທີ່ມີຄວາມຮູ້ຄວາມສາມາດ ແລະແອບແຝງໄປດ້ວຍຄວາມເລິກລັບ ທີ່ເຮັດໃຫ້ທຸກຄົນຈະຕ້ອງນັບຖື .

ພູຫວານ ສັກສາຍຕາຫລຽວເບິ່ງເຂົາ ປານປາຍມີດທີ່ແຫລມຄົມແທງເຂົ້າໃສ່ໂຕເຂົາ ພ້ອມທັງຈົ່ມພຶມພຳ " ຮື ! ເຮັດວ່າເປັນນັກສຶກສາປັນຍາຊົນ ແຕ່ຄືງແມ່ນພວກຂາຍຊາດຫລາຍກວ່າ "

ແລ້ວນາງກໍ່ເຮັດເສີຍແບບບໍ່ຮູ້ບໍ່ເຫັນ :

- ຂ້າພະເຈົ້າຊື່ວ່າ ແສງສົມບູນ ມີຊື່ນ້ອຍວ່າ ແອຫວານ ...

ພໍແຕ່ເວົ້າຮອດນີ້ ທຸກຄົນໃນຫ້ອງໂຮຂຶ້ນ ເປັນສຽງດຽວກັນ : ຮູ່... ແລ້ວກໍ່ຫລຽວໄປເບື້ອງ ພູຫວານ .

ພູຫວານ ບໍ່ຮູ້ໜ້າຮູ້ຫລັງ ນາງເຮັດໜ້າແດງແລະເວົ້າຂຶ້ນ :

- ອາວ ! ເປັນຫຍັງຈິ່ງຫລຽວເບິ່ງຂ້ອຍ ?

" ຄືງຈະແມ່ນຊື່ ຫວານ ຄືກັນລະຕີ້ "

ຄຳສະເໜີ ຍັງສືບຕໍ່ :

ຂ້າພະເຈົ້າ ເປັນນັກສຶກສາ ປີທຳອິດ. ຂ້າພະເຈົ້າສຸດທີ່ດີໃຈຫາອັນປຽບບໍ່ໄດ້ ເມື່ອປະເທດຊາດໄດ້ຮັບການປົດປ່ອຍ ແລະ ຂ້າພະເຈົ້າຂໍອາສາ ສະໝັກເຂົ້າ ເປັນທະຫານຮັບໃຊ້ຊາດ .

ພໍແຕ່ຄຳສະເໜີຕົວສຸດ ອ້າຍຄູເລີດກໍ່ເວົ້າຊ້ອນຂຶ້ນ :

-ພວກເຂົາເຫລົ່ານີ້ເປັນນັກຮຽນນັກສຶກສາໃນລະບອບເກົ່າ ແຕ່ເມື່ອປະເທດຊາດ ໄດ້ຮັບການປົດປ່ອຍແລ້ວ ພວກເຂົາກໍ່ຕື່ນຕົວ ອາສາ ສະ ມັກເຂົ້າເປັນທະຫານຮັບໃຊ້ຊາດ. ທາງຂັ້ນເທິງໄດ້ສົ່ງພວກເຂົາເຈົ້າເຫລົ່າ

ນີ້ ມາສຶກສາຕໍ່ຢູ່ທີ່ ໂຮງຮຽນທະຫານ ວຽງໄຊແຫ່ງນີ້. ອ້າຍຄູຫວັງວ່າ ພວກ ເຮົາໝົດທຸກຄົນຈະຮັກແພງ ຊ່ວຍເຫລືອຊຶ່ງກັນ ແລະ ກັນໃນການ ຮໍ່າຮຽນກໍ່ຄືດ້ານອື່ນໆ ແລະ ເຫດຜົນໃຫຍ່ໄປກວ່ານີ້ ກໍ່ຄືພ້ອມກັນຮັກສາ ແລະກໍ່ສ້າງປະເທດຊາດ ເຮົາໃຫ້ກ້າວໜ້າ ທັນກັບບັນດາປະເທດໃນ ໂລກ.

ຕໍ່ໄປນີ້ ໃຫ້ພວກສະຫາຍຜູ້ຢູ່ເກົ່າ ສະເໜີຕົວຕໍ່ຜູ້ທີ່ມາໃໝ່ ເພື່ອລື້ງ ໜ້າຈໍາຕາກັນ ແລ້ວຈຶ່ງມາແບ່ງຈຸ ແບ່ງໜ່ວຍເຫັນດີນໍາບໍ່ ? ເອົາ! ເພື່ອບໍ່ ເປັນການຊັກຊ້າເວລາ ໃຫ້ຫົວໜ້າ ຫ້ອງສະເໜີຕົວກ່ອນ !

ທຸກຄົນໃນຫ້ອງແຊວງ ຫລຽວໄປຫລຽວມາ - ທະຫານໃໝ່ ສາມຄົນ ຍັງຄົງຢືນຢູ່ບ່ອນເກົ່າ .

ສະຫາຍ ຜູ້ນັ່ງຢູ່ແຖວໃນໂຕະທີສອງ ລຸກຂຶ້ນຈາກບ່ອນນັ່ງ ເຂົາ ເປັນຄົນໃຫຍ່ສູງ ໜ້າຕາເຄັ່ງຂຶມ, ຜິວໜັງດໍາແດງ, ດັງຄົມຄົ້ວດົກ. ເຂົາ ຫລຽວໄປທົ່ວຫ້ອງ ແລ້ວອອກຈາກບ່ອນນັ່ງ ໄປຈັບແຂນສະບາຍອ້າຍ ນ້ອງທະຫານ ສາມຄົນ ທີ່ມາໃໝ່ ພາຍໃຕ້ສຽງຕົບມື ຂອງເພື່ອນສະ ຫາຍ ພ້ອມກັບຮອຍຍິ້ມປີຕິຊົມຊື່ນ ແລ້ວກັບມາຢືນບ່ອນເກົ່າ ແລະ ເລີ່ມຕົ້ນ ສະເໜີຕົວ :

-ເຮົາ ເອງ ຊື່ ໂພທອງ ນະອອນສີ ເອີ້ນສັ້ນໆ ວ່າ ໂພທອງກໍ່ໄດ້. ຖ້າຈະເວົ້າເຖິງອາຍຸແລ້ວ ກໍ່ກໍາລັງຍ່າງຕາມທາງເລກສາມ ແຕ່ເຮົາຄິດ ວ່າມັນບໍ່ມີອຸປະສັກຫຍັງດອກ ເພາະທາງກໍຮຽງດີຢູ່ ...

ທຸກຄົນຫົວຂຶ້ນຄ່ອຍໆ ຕໍ່ຄໍາເວົ້າທີ່ມີສະເໜ່ ຂອງໂພທອງ. ເຂົາ ຍັງສືບຕໍ່ :

-ເຮົາເອງເປັນຫົວໜ້າຫ້ອງ9 ເບຂອງພວກເຮົາ ຖ້າມີຫຍັງຕ້ອງ ການຄວາມຊ່ວຍເຫລືອ ແມ່ນຮ້ອງຫາໄດ້ທຸກຍາມ ຍົກເວັ້ນແຕ່ເລື່ອງ

ດຽວ... ແມ່ນເຮົາກໍ່ຍອມຄືກັນ ແຮ່ ໆ ...

ເຂົານັ່ງລົງ ແລະ ເຮັດໜ້າບານປານກະດົ້ງ ຕໍ່ຄຳສະເໜີຕົວຂອງຕົນເອງ .

ແສງສົມບູນ ຫລຽວເບິ່ງ ໂພທອງ ດ້ວຍຄວາມເຄົາລົບ ແລະຄິດ "ເຂົາສົມເປັນອ້າຍໃຫຍ່ ຢູ່ໃນຫ້ອງອີຫລີ ! ໜ້ານັບຖື " .

- ອ້າວ ! ຜູ້ຕໍ່ໄປ ແມ່ນຮອງຫົວໜ້າຫ້ອງ !

ພູທວານ ງວາກຊ້າຍ ງວາກຂວາ ສະແດງທ່າທີ ບໍ່ພໍໃຈປານໃດທີ່ ອ້າຍຄູເລີດ ໃຫ້ນາງ ສະເໜີຕົວ ເປັນອັນດັບສອງ ແຕ່ກໍ່ຈຳເປັນລຸກຂຶ້ນຈາກບ່ອນນັ່ງ ແລ້ວນາງຟ້າວປ່ຽນສີໜ້າ ແລະ ເວົ້າອອກມາດ້ວຍນ້ຳສຽງທີ່ເຄັ່ງຂຶມອອກມາຕໍ່ໜ້າທຸກຄົນວ່າ :

- ເຮົາເອງຊື່ພູທວານ ແຕ່ຄືງບໍ່ຫວານຄືຊື່ດອກ ແລະເປັນຮອງຫົວໜ້າຫ້ອງ ຮັບຜິດຊອບດ້ານອອກແຮງງານ ແລະກິດລະບຽບຂອງຫ້ອງ 9 ເບ ...

ທຸກຄົນນັ່ງງຶງ ເບິ່ງໜ້າກັນ !

II

ຄວາມຄຽດແຄ້ນສັດຕູ ໃນຫົວໃຈຂອງນາງນ້ອຍ ພູທວານ ຄົງບໍ່ມີ ວັນຈາງຫາຍໄປໄດ້ເປັນອັນຂາດ ເພາະສົງຄາມອັນໂຫດຫ້ຽມ ຂອງພວກຈັກກະພັດ ຜູ້ຮຸກຮານ ແລະ ລູກແຫລ້ງຕົນມີ ຂອງມັນໄດ້ພາກຊີວິດຂອງ ພໍ່ແມ່ນາງໄປ ໂດຍບໍ່ມີວັນຈະກັບມາ ແລ້ວປ່ອຍນາງໄວ້ ພ້ອມກັບນ້ອງຊາຍ ຜູ້ຕາດຳໆ. ປ່ອຍສອງເອື້ອຍນ້ອງ ພູທວານ ໄວ້ບົນ

ໜ້າໂລກ ທີ່ເຕັມໄປດ້ວຍສົງຄາມ ແລະ ຄວາມຕາຍ .

ນາງຮ້ອງໄຫ້ຫາພໍ່ແມ່ ໃນຍາມຍິນຍິງ ໝາກໂບມແຕກ

ນາງຮ້ອງໄຫ້ຫາພໍ່ແມ່ ໃນຍາມ ມືດມິດ ງຽບເຫງົາ .

ຄວາມແຄ້ນສັດຕູ ຂອງໂລກທັງໂລກນີ້ ຄືງໂຮມມາໃສ່ນາງຄົນດຽວ .

ນາງຍັງຈື່ ພໍ່ນາງເປັນທະຫານ ແຕ່ລະເທື່ອ ກ່ອນຈະອອກໄປແນວໜ້າ ພໍ່ສັ່ງແມ່ ວ່າ :

- ອ້າຍຈະໄປຕີເສິກ ! ໃຫ້ນ້ອງເບິ່ງແຍງລູກດີໆ !

ແມ່ມີແຕ່ນັ່ງມິດ ແລະຫລັ່ງນ້ຳຕາກອດນາງ ແລະນ້ອງໄວ້ແໜ້ນໆ .

ພູຫວານ ຍັງນ້ອຍ ນາງບໍ່ຮູ້ວ່າ ໄປສະໜາມ ຕີເສິກ ແມ່ນຫຍັງ ? ແລະແລ້ວວັນໜຶ່ງ ມີທະຫານຄົນໜຶ່ງເຂົ້າມາໃນເຮືອນ ເຂົາຍື່ນຈົດໝາຍ ແລະບ່າໂລເກົ່າໆ ຂອງພໍ່ ໃຫ້ແມ່. ພູຫວານ ບໍ່ໄດ້ຍິນທະຫານຄົນນັ້ນເວົ້າຫຍັງນຳແມ່ ແຕ່ເຫັນແມ່ລົ້ມລົງ ແລະ ໝົດສະຕິໄປ !

ຫລັງຈາກນັ້ນ ແມ່ນາງໄດ້ບອກນາງວ່າ :

-ພູຫວານ ລູກແມ່ ! ພໍ່ຂອງພວກລູກໄດ້ເສຍສະຫລະຊີວິດ ເລືອດເນື້ອ ຢ່າງພິລະອາດຫານ ໃນບັ້ນຣົບແນວໜ້າ .

ອີກສອງປີຕໍ່ມາ ພວກຈັກກະພັດ ແລະລູກແຫລ້ງຕີນມືໄດ້ເພີ່ມທະວີ ຖິ້ມລະເບີດຢ່າງຮ້າຍແຮງ ລົງມາເທິງດິນແດນ ຊຽງຂວາງພິລະອາດຫານ ແມ່ນາງພ້ອມດ້ວຍຊາວບ້ານ ຈຳນວນຫລວງຫລາຍ ທີ່ບໍ່ມີໂທດກຳຫຍັງກໍ່ໄດ້ ເສຍຊີວິດໄປ ຍ້ອນລູກແຕກ ລູກໂບມ ທີ່ມາຈາກເງື້ອມມືອັນໂຫດຮ້າຍ ປ່າເຖື່ອນ ຂອງພວກຈັກກະພັດຜູ້ຮຸກຮານ .

ພູຫວານ ຮ້ອງໄຫ້ຫລັ່ງນ້ຳຕາ ອູ້ມກອດຮ່າງຄີງ ທີ່ເຕັມໄປດ້ວຍ

ເລືອດຂອງແມ່. ຄວາມຄຽດແຄ້ນສັດຕູ ລຸກໄຫມ້ເປັນໄຟໃນຫົວໃຈນາງນ້ອຍ ພູຫວານ ນາງ ແລະ ນ້ອງຊາຍ ກາຍເປັນເດັກກຳພ້າ .

ອ້າຍນ້ອງທະຫານໄດ້ຮັບເອົາສອງເອື້ອຍນ້ອງ ພູຫວານມາລ້ຽງ ເປັນລູກລ້ຽງ ຂອງກອງພັນ ຫລັງຈາກນັ້ນ ຈຶ່ງໄດ້ສົ່ງສອງເອື້ອຍນ້ອງໄປຮຽນ ທີ່ໂຮງຮຽນກອງທັບ ຊຶ່ງເວລານັ້ນ ຕັ້ງຢູ່ແຂວງແທ້ງຮວ້າ ປະເທດຫວຽດນາມ ແລະຫລັງຈາກປະເທດຊາດໄດ້ຮັບການປົດປ່ອຍ ແລະ ປະກາດເອກະລາດໃນປີ 1975 ໂຮງຮຽນກອງທັບ ຈຶ່ງໄດ້ຍ້າຍກັບມາຕັ້ງຢູ່ ເມືອງວຽງໄຊ ດິນແດນແຫ່ງການປະຕິວັດ ແລະ ພິລະອາດຫານ ແລະມີ ຊື່ວ່າ ໂຮງຮຽນກອງທັບ ທີ່ພູຫວານ ກຳລັງຮ່ຳຮຽນ ໃນປະຈຸບັນນີ້ .

ນາງເສຍດາຍ ທີ່ຕົນບໍ່ໃຫຍ່ໄວໆ ເພື່ອຈະໄດ້ຈັບປືນອອກສະໜາມຮົບ ດັບສູນ ພວກສັດຕູຜູ້ຮຸກຮານ ເພື່ອຈະໄດ້ແກ້ແຄ້ນແທນພໍ່ ແລະແມ່ນາງ.

ນາງບໍ່ເຄີຍລືມຄຳເວົ້າຂອງ ທ່ານຫົວໜ້າໂຮງຮຽນ ໃນເວລາປະຊຸມເວົ້າວ່າ :

- ເຖິງວ່າ ປະເທດຊາດຂອງພວກເຮົາ ຈະໄດ້ຮັບການປົດປ່ອຍແລ້ວກໍ່ຕາມ ແຕ່ພວກປະຕິການ ແລະພວກບໍ່ຫວັງດີ ຍັງຫວັງຈະທຳລາຍປະເທດຊາດຂອງພວກເຮົາ ໃນທຸກເວລາ, ພວກເຮົາໝົດທຸກຄົນ ຈຶ່ງຊ່ວຍກັນ ແລະສາມັກຄີກັນ ປົກປັກຮັກສາ ຜືນແຜ່ນດິນອັນແສນຮັກ ຂອງພວກເຮົາ ແລະທັບມ້າງ ທຸກເລ່ກົນຂອງພວກສັດຕູ .

ໜ້າທີ່ຂອງ ພູຫວານ ໃນປະຈຸບັນແມ່ນອອກແຮງຮ່ຳຮຽນ ຝຶກຝົນຫລໍ່ຫລອມຕົນເອງ, ຫ້າວຫັນໃນທຸກວຽກງານ ທີ່ການຈັດຕັ້ງມອບໝາຍໃຫ້ . ປີໃດນາງກໍ່ໄດ້ເປັນນັກຮຽນດີ ແລະ ເຮັດໃຫ້ໝູ່ເພື່ອນນິຍົມ

ຊີມຊອບ ແລະນາງກໍ່ແມ່ນໜຶ່ງ ໃນຄະນະຫ້ອງ ທີ່ຂະຫຍັນຕະຫລອດມາ. ການທີ່ອ້າຍຄູເລີດ ເອົາພວກນັກຮຽນ ສອງໂຕເມືອງເຂົ້າມາ ຮຽນຮ່ວມຫ້ອງ ດຽວກັນກັບນາງນັ້ນ ເຮັດໃຫ້ນາງ ບໍ່ພໍໃຈ ເພາະພວກມາແຕ່ ສອງໂຕເມືອງ ກໍ່ແມ່ນພວກລູກແຫລ້ງຕີນມື ຂອງພວກຈັກກະພັດທັ້ງນັ້ນລະ ! ຈະເຊື່ອໃຈໄດ້ແນວໃດ ? ແລະ ຮ້າຍແຮງໄປກວ່ານັ້ນ ກໍ່ແມ່ນເອົາ ອີ່ຕາ ແວ່ນ ມາຢູ່ໃນໜ່ວຍດຽວກັນກັບນາງ ພ້ອມນັ້ນອ້າຍຄູເລີດຍັງເວົ້າຢ້ຳ ໄປຢ້ຳມາວ່າ :

ນ້ອງເປັນຄະນະຫ້ອງ ພ້ອມທັງເປັນຫົວໜ້າຊາວໜຸ່ມ,ນ້ອງຕ້ອງມີໜ້າທີ່ເບິ່ງ ແຍງ ຊ່ວຍເຫລືອ ຜູ້ທີ່ມາໃໝ່ ໂດຍສະເພາະແມ່ນ ນັກຮຽນນັກສຶກສາ ທີ່ຫາກໍ່ມາຈາກ ສອງໂຕເມືອງ ! "

III

ຮູບພາບອ້າຍທະຫານປົດປ່ອຍ ຜູ້ອົງອາດສະຫງ່າຜ່າເຜີຍໃນຊຸດທະຫານ ສີຂຽວເຂັ້ມ, ໃສ່ໝວກແງັບ ພາຍປືນ ຍິ້ມແຍ້ມແຈ່ມໃສ ອູ້ມຊໍ່ດອກໄມ້ ໂບກມືໃສ່ ປະຊາຊົນ, ນັກຮຽນ ນັກສຶກສາ ແລະຊາວເມືອງວຽງຈັນ ທີ່ຢືນເຕັມສອງຝາກທາງ ມືຈັບທຸງພັກ ແລະທຸງຊາດ ແກວ່ງໄກວໄປມາ ຕ້ອນຮັບອ້າຍທະຫານປົດປ່ອຍ ໄດ້ຝັງເລິກໃນຫົວໃຈດວງນ້ອຍໆຂອງອ້າຍນັກສຶກສາ ແສງສົມບູນ ຕະຫລອດມາ ພ້ອມກັບຄວາມໄຝ່ຝັນຢາກຈະໄດ້ນຸ່ງຊຸດທະຫານ ກຳປືນຮັບໃຊ້ຊາດ .

ແສງສົມບູນ ເປັນໜຶ່ງໃນຈຳນວນຫລາຍຄົນ ນັກຮຽນ ນັກສຶກສາ ທີ່ມີຄວາມກ້າວໜ້າ ຕື່ນຕົວປະກອບສ່ວນ ເຂົ້າໃນຂະບວນ ປົດປ່ອຍຊາດ ເຖິງວ່າພໍ່ຂອງເຂົາຈະເປັນຂ້າລາຊະການ ຝ່າຍວຽງຈັນ.ແມ່ເປັນແມ່

ເຮືອນ ເຂົາມີເຮືອນຫລັງໃຫຍ່, ມີລົດຂີ່, ມີເງິນຈ່າຍບໍ່ອັ້ນ, ແສງສົມບູນ ເປັນນັກຮຽນ ມະຫາວິທະຍາໄລແພດສາດ ປີທີໜຶ່ງ, ແຕ່ເຂົາກໍ່ເປັນ ຄົນ ທຳອິດຈິດຊື່ອາສາ ສະໝັກ ເຂົ້າເປັນທະ ຫານ ເພື່ອ ປະກອບ ສ່ວນ ອັນ ນ້ອຍໆ ຂອງຕົນເຂົ້າໃນ ຂະບວນ ປົກປັກຮັກສາປະເທດ ຊາດ ເພາະ ທ້າວຍັງຈື່ໄດ້ການຂູດຮີດ ຂົ່ມເຫັງ ຂອງພວກສັດຕູ ຕໍ່ຊາວບ້ານ. ຊ້າ ຟັນລັນແທງ ຜູ້ທີ່ບໍລິສຸດໃນລະບອບເກົ່າ.

ມີເທື່ອໜຶ່ງ ແສງສົມບູນ ໄປຕະຫລາດນຳແມ່ ແລ້ວເຫັນເຫດການ ທີ່ພວກທະຫານ ຍິງເດັກນ້ອຍຄົນໜຶ່ງ ຢູ່ກາງຕະຫລາດ ໃນຂະນະທີ່ ເດັກຄົນນັ້ນ ແລ່ນມາແຕ່ໃສ ແລ້ວແລ່ນຕັດໜ້າພວກມັນ. ພວກມັນກໍ່ຈັບ ເດັກຄົນນັ້ນ ແລ້ວຍິງຖິ້ມໂດຍບໍ່ມີເຫດຜົນ ແລະອ້າງວ່າດູຖູກ ເຈົ້າໜ້າ ທີ່ ກຳລັງປະຕິບັດງານ ພ້ອມທັງທຸບຕີ ຜູ້ເປັນແມ່ ທີ່ຮ້ອງໄຫ້ ຈົນນ້ຳຕາ ຈະກາຍເປັນເລືອດ. ເຫດການໃນຄັ້ງນັ້ນເຮັດໃຫ້ ແສງສົມບູນ ຈື່ບໍ່ມີວັນ ລືມໄດ້ເປັນອັນຂາດ ແລະ ເຮັດໃຫ້ທ້າວ ມີຄວາມຄຽດແຄ້ນສັດຕູ ຕະ ຫລອດມາ .

ແສງສົມບູນ ຍັງຈື່ຈະແຈ້ງຄຳເວົ້າແຕ່ລະຈຸດ ແຕ່ລະຄຳຂອງ ອ້າຍທິວໜ້າກອງພັນ ທີ່ລົງມາເຜີຍແຜ່ ແນວທາງ ຂອງການປະຕິວັດ ໃຫ້ ພໍ່ແມ່ປະຊາຊົນໄດ້ຟັງ ສຽງນັ້ນ ດັງກ້ອງຢູ່ໃນຫູ ຂອງແສງສົມບູນ.

- ພໍ່ແມ່ພີ່ນ້ອງ ທຸກຄົນທີ່ນັບຖື ! ດຽວນີ້ປະເທດຊາດ ຂອງພວກ ເຮົາໄດ້ຮັບການປົດປ່ອຍ ຈາກພວກຈັກກະພັດ ຜູ້ຮຸກຮານ ແລະ ລູກແຫລ້ ຕົນມື ຂອງພວກມັນ ນັບແຕ່ນີ້ໄປ ປະເທດຊາດຂອງພວກເຮົາ ຈະບໍ່ມີສົງ ຄາມ ອັນຍືດເຍື້ອ ຍາວນານ ໂຫດຮ້າຍປ່າເຖື່ອນ, ຈະບໍ່ມີຍິນຍິງ, ບໍ່ມີລູກ ແຕກລູກໂບມ ຖິ້ມລົງແຜ່ນດິນລາວອີກແລ້ວ ອິດສະຫລະພາບ ປະຊາ ທິປະໄຕ ໄດ້ມາເປັນຂອງພວກເຮົາ ໝົດທຸກຄົນ ພາຍໃຕ້ການນຳ

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ